# ກົດລະບຽບການປະພຶດຂອງນັກຮຽນ

## ຂໍ້ມູນສໍາລັບນັກຮຽນ ແລະພໍ່ແມ່ ແລະ ຜູ້ດູແລ.

ໃນໂຮງຮຽນຫຼວງຂອງ ຣັດ NSW ທຸກຄົນລ້ວນມີສ່ວນ ແລະ ພະຍາຍາມເພື່ອບັນລຸ ມາດຕະຖານສູງສຸດຂອງການຮຽນຮູ້.

**ກົດລະບຽບນີ້ແມ່ນໃຊ້ສໍາລັບນັກຮຽນທຸກຄົນໃນໂຮງຮຽນຫຼວງ ຣັດ NSW ທັງໝົດ. ມັນໃຊ້ກັບທຸກກິດຈະກໍາຂອງໂຮງຮຽນ, ທັງຢູ່ໃນແລະນອກສະຖານທີ່ຂອງໂຮງຮຽນ, ລວມທັງອອນໄລນ໌, ແລະ ວິທີການທີ່ນັກຮຽນປະພຶດຕົນເອງ ແລະ ກັບເພື່ອນນັກຮຽນ, ຄູອາຈານ, ພະນັກງານໂຮງຮຽນແລະສະມາຊິກຊຸມຊົນ.**

ຂ້ອຍປະຕິບັດຕາມກົດລະບຽບໂດຍການ**ເຄົາລົບຜູ້ອື່ນ, ມີຄວາມຮັບຜິດຊອບ ແລະ ຮັກສາຄວາມປອດໄພ**, ແລະ ໂດຍການປະຕິບັດຕາມຄໍາແນະນໍາຂອງຄູອາຈານແລະພະນັກງານ.

---

## ເຄົາຣົບທຸກຄົນ

ນີ້ໝາຍຄວາມວ່າການເອົາໃຈໃສ່ ແລະ ຄວາມເຂົ້າໃຈເພື່ອໃຫ້ທຸກຄົນຮູ້ສຶກໄດ້ຮັບການຕ້ອນຮັບແລະມີສ່ວນຮ່ວມ.

**ຂ້ອຍຈະ:**

- ຟັງ ແລະ ເວົ້າຈາດ້ວຍຄວາມເຄົາລົບ
- ໃຫ້ໂອກາດຄົນອື່ນສຸມໃສ່ການຮຽນຮູ້ຂອງພວກເຂົາ
- ໃຫ້ຄຸນຄ່າແລະຍອມຮັບທຸກໆຄົນ ແລະ ປະຕິບັດຕໍ່ພວກເຂົາຢ່າງຍຸດຕິທໍາ
- ດູແລຮັກສາສະພາບແວດລ້ອມໃນໂຮງຮຽນຂອງພວກເຮົາ
- ໃສ່ເຄື່ອງແບບນັກຮຽນໃຫ້ຖືກຕ້ອງ ແລະ ດ້ວຍຄວາມພາກພູມໃຈ.

---

## ມີຄວາມຮັບຜິດຊອບ

ນີ້ໝາຍຄວາມວ່າຈະລະມັດລະວັງໃນການກະທໍາຂອງພວກເຮົາເພື່ອໃຫ້ທຸກຄົນສາມາດຮຽນຮູ້ແລະເຂົ້າກັນໄດ້.

**ຂ້ອຍຈະ:**

- ໄປໂຮງຮຽນທຸກໆມື້ເທົ່າທີ່ຂ້ອຍເຮັດໄດ້, ມາຮອດໂຮງຮຽນແລະເຂົ້າຫ້ອງຮຽນໃຫ້ທັນເວລາ, ເອົາສິ່ງທີ່ຂ້ອຍຕ້ອງການມານໍາ, ແລະ ພ້ອມທີ່ຈະຮຽນຮູ້
- ປະຕິບັດຕາມກົດລະບຽບຂອງໂຮງຮຽນ ແລະ  ຫ້ອງຮຽນ
- ໃຊ້ເຕັກໂນໂລຢີຢ່າງປອດໄພ ແລະ ເພື່ອການຮຽນຮູ້
- ເຮັດວຽກໂຮງຮຽນຂອງຂ້ອຍໃຫ້ສໍາເລັດ, ພະຍາຍາມຢ່າງເຕັມທີ່ ແລະ ຂໍຄວາມຊ່ວຍເຫຼືອໃນເວລາທີ່ຂ້ອຍຕ້ອງການ
- ຊ່ວຍເຫຼືອຄົນອື່ນເມື່ອຂ້ອຍສາມາດເຮັດໄດ້
- ຮຽນຮູ້ຈາກຄວາມຜິດພາດຂອງຕົນເອງ ແລະ ພະຍາຍາມປັບປຸງ.

NSW GOVERNMENT

## ຈົ່ງລະມັດລະວັງ

ນີ້ໝາຍເຖິງການດູແລຕົນເອງແລະຄົນອື່ນເພື່ອໃຫ້ທຸກຄົນປອດໄພໃນໂຮງຮຽນຂອງພວກ ເຮົາ.

**ຂ້ອຍຈະ:**

- ປະຕິບັດຕາມຄໍາແນະນໍາຂອງຄູອາຈານແລະພະນັກງານໂຮງຮຽນ
- ເຄົາລົບພື້ນທີ່ສ່ວນຕົວ, ຄວາມເປັນສ່ວນຕົວ ແລະຊັບສິນຂອງຄົນອື່ນ
- ເວົ້າອອກມາ ແລະ ຂໍຄວາມຊ່ວຍເຫຼືອ ຖ້າຜູ້ໃດຮູ້ສຶກບໍ່ປອດໄພ ຫຼື ຖືກປະຕິບັດຢ່າງບໍ່ຍຸຕິທໍາ
- ແກ້ໄຂຄວາມແຕກຕ່າງຢ່າງໃຈເຢັນ ແລະ ຍຸຕິທໍາ.

---

## ເພື່ອຄວາມປອດໄພຂອງທຸກຄົນ ຂ້ອຍຕ້ອງບໍ່:

- ປະຕິບັດຕໍ່ໃຜຢ່າງບໍ່ເປັນທໍາຍ້ອນສິ່ງທີ່ພວກເຂົາເປັນ ຫຼື ມີສິ່ງທີ່ເຮັດໃຫ້ພວກເຂົາແຕກຕ່າງຈາກຂ້ອຍ
- ໃຊ້ຄວາມຮຸນແຮງ, ທໍາຮ້າຍ, ຂົ່ມຂູ່, ຄຸກຄາມ ຫຼື ກັ່ນແກ້ງໃຜຜູ້ໜຶ່ງ, ລວມເຖິງການໃຊ້ໂທລະສັບ, ອຸປະກອນ, ຄອມພິວເຕີ, ອອນລາຍ ຫຼື ສື່ສັງຄົມ
- ເອົາອາວຸດ, ຢາເສບຕິດທີ່ຜິດກົດໝາຍ, ເຫຼົ້າ, ເວບ, ກອກຢາໄຟຟ້າ, ຫຼື ຢາສູບໄປໂຮງຮຽນ.

ຖ້າຂ້ອຍເຮັດສິ່ງເຫຼົ່ານີ້, ພະນັກງານຈະດໍາເນີນການເພື່ອໃຫ້ທຸກຄົນປອດໄພແລະສາມາດຮຽນຮູ້ໄດ້. ນີ້ອາດຈະລວມເຖິງການສັ່ງໃຫ້ພັກຮຽນ.

ຄູອາຈານແລະພະນັກງານໂຮງຮຽນຊ່ວຍໃຫ້ຂ້ອຍຮຽນຮູ້, ເລືອກສິ່ງທີ່ດີ ແລະ ປອດໄພ. ຂ້ອຍຈະປະຕິບັດຕາມກົດລະບຽບ, ສະໜັບສະໜູນຜູ້ອື່ນ, ເຄົາລົບສິດຂອງພວກເຂົາ ແລະແບ່ງປັນຄວາມຄິດຂອງຂ້ອຍເພື່ອເຮັດໃຫ້ໂຮງຮຽນຂອງພວກເຮົາເປັນບ່ອນທີ່ດີສໍາລັບການຮຽນຮູ້ແລະຮູ້ສຶກເປັນສ່ວນນຶ່ງຂອງໂຮງຮຽນ.

☐ ຂ້ອຍຮັບຮູ້ວ່າຂ້ອຍໄດ້ຮັບກົດລະບຽບການປະພຶດຂອງນັກຮຽນ ແລະ ຮັບຮູ້ຄວາມຄາດຫວັງທີ່ໄດ້ລະບຸໄວ້.

ຊື່ນັກສຶກສາ: ..........................................................................................................

☐ ຂ້ອຍ / ພວກເຮົາຮັບຮູ້ວ່າພວກເຮົາໄດ້ຮັບກົດລະບຽບການປະພຶດຂອງນັກຮຽນ ແລະ ຮັບຮູ້ຄວາມຄາດຫວັງທີ່ໄດ້ລະບຸໄວ້.

ຊື່ ພໍ່ແມ່/ຜູ້ດູແລ: ..........................................................................................................

ລາຍເຊັນ ພໍ່ແມ່/ຜູ້ດູແລ: ..........................................................................................................

## ບໍລິການ ນາຍພາສາ ທາງໂທລະສັບ

ຖ້າທ່ານຕ້ອງການຂໍ້ມູນເພີ່ມເຕີມ, ກະລຸນາໂທຫາທ່ານຄູໃຫຍ່ຂອງໂຮງຮຽນ. ຖ້າທ່ານຕ້ອງການນາຍພາສາເພື່ອຊ່ວຍໃນການສອບຖາມຂອງທ່ານ, ກະລຸນາໂທຫາບໍລິການນາຍພາສາ ທາງໂທລະສັບ ຕາມໝາຍເລກ 131 450 ແລະ ຂໍນາຍພາສາໃນພາສາຂອງທ່ານ.

ບອກຜູ້ຮັບສາຍເບີໂທລະສັບທີ່ທ່ານຕ້ອງການທີ່ຈະໂທຫາ ແລະ ຜູ້ຮັບສາຍຈະຈັດຫານາຍພາສາຕາມສາຍເພື່ອຊ່ວຍທ່ານໃນການສົນທະນາ. ທ່ານຈະບໍ່ຖືກເກັບຄ່າບໍລິການນີ້.